ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 3812/ກປ

ນະຄອນຫຼວງວຽງຈັນ, ວັນທີ 04 SEP 2023

# ໜັງສືສະເໜີ

**ຮຽນ:** ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ທີ່ນັບຖື.

**ເລື່ອງ:** ແຜນການສ້າງ ແລະ ປັບປຸງກົດໝາຍ 05 ປີ (2026-2030) ຂອງກະຊວງກະສິກຳ ແລະ ປ່າໄມ້.

- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືທາງລັດຖະການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 84/ຫສນຍ, ລົງວັນທີ 10 ເມສາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ລົງວັນທີ 29 ສິງຫາ 2023.

ກະຊວງກະສິກຳ ແລະ ປ່າໄມ້, ຂໍຖືເປັນກຽດຮຽນມາຍັງທ່ານ ຊາບວ່າ: ຜ່ານການຄົ້ນຄວ້າ ແລະ ທົບທວນຄືນ ບັນດາ 09 ກົດໝາຍ (ກົດໝາຍ ວ່າດ້ວຍກະສິກຳ, ກົດໝາຍ ວ່າດ້ວຍປ່າໄມ້, ກົດໝາຍ ວ່າດ້ວຍຊົນລະປະທານ, ກົດໝາຍ ວ່າດ້ວຍສັດປ່າ, ກົດໝາຍ ວ່າດ້ວຍສັດນ້ຳ ແລະ ການປະມົງ, ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ, ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ກົດໝາຍ ວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ແລະ ກົດໝາຍ ວ່າດ້ວຍຄວາມປອດໄພດ້ານເຕັກໂນໂລຊີ-ຊີວະພາບ) ເຫັນວ່າ: ສ່ວນໃຫຍ່ແມ່ນຍັງສອດຄ່ອງ ແລະ ໄດ້ປັບປຸງໃໝ່ແລ້ວ ໃນແຜນການສ້າງ ແລະ ປັບປຸງກົດໝາຍ 05 ປີ ຂອງສະພາແຫ່ງຊາດ ຊຸດທີ IX (2021-2025). ນອກນັ້ນ, ກໍ່ຍັງມີບາງບັນຫາສຳຄັນ ແລະ ຈຳເປັນຕ້ອງໄດ້ຄົ້ນຄວ້າສ້າງເປັນກົດໝາຍໃໝ່ ເພື່ອສະເໜີເຂົ້າໃນແຜນການສ້າງ ແລະ ປັບປຸງກົດໝາຍ 05 ປີ ຂອງສະພາແຫ່ງຊາດ ຊຸດທີ X (2026-2030) ຊຶ່ງມີກົດໝາຍສ້າງໃໝ່ 01 ສະບັບ ດັ່ງນີ້:

| ລ/ດ | ຊື່ກົດໝາຍ | ສ້າງໃໝ່ | ປັບປຸງ | ຄາດຄະເນ | ກົມຮັບຜິດຊອບ |
|---|---|---|---|---|---|
| 01 | "ຮ່າງ" ກົດໝາຍ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ | ✓ | | ທ້າຍປີ 2026 | ກົມປູກຝັງ |

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອພິຈາລະນາ ຕາມທາງຄວນດ້ວຍ.

ລັດຖະມົນຕີ

ປອ. ເພັດ ພົມພິພັກ

ບ່ອນນຳສົ່ງ:

1. ທ່ານ ລມຕ, ຮລມຕ ທ່ານລະ 01 ສະບັບ (ໃຊ້ຕາງລາຍງານ);
2. ຫ້ອງການ 01 ສະບັບ (ເພື່ອຊາບ);
3. ກົມປູກຝັງ 01 ສະບັບ (ເພື່ອກະກຽມ);
4. ພະແນກນິຕິກຳ 01 ສະບັບ (ເພື່ອຊຸກຍູ້);
5. ເກັບຮັກສາໄວ້ 01 ສະບັບ.

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້/ພະແນກນິຕິກຳ/ໂທລະສັບ ແລະ ມືຖື 020 5206 4838

ສແກນດ້ວຍ CamScanner